ສັຽງພຣະຊົນແລ້ວ ພວກອາມາດຈຶ່ງໄປເຊີນເອົາ ທ້າວໃຄ່ນົວບານ (ຫລານພຣະຍາສາມແສນໄທ) ຜູ້ຄອງເມືອງຊຽງໃຄ້ ມາເປັນເຈົ້າແຜ່ນດິນ. ພຣະຍາຊຽງໄຄ້ຄອງເມືອງໄດ້ 3 ປີ ນາງເທວີກໍທຳອຸບາຍຂ້າເສັຽທີ່ສົບຄານ. ເມື່ອພຣະຍາຊຽງໄຄ້ຕາຍແລ້ວ ພວກເສນາອາມາດ ຈຶ່ງໄປເຊີນເອົາ ທ້າວວັງບຸຣີ ໂອຣົດພຣະຍາສາມແສນໄທ ທີ່ຢູ່ນະຄອນວຽງຈັນ ມາສເວີຍຣາດ. ທ້າວວັງບຸຣີຊາບຄວາມໂຫດຮ້າຍຂອງນາງມະຫາເທວີ ຈຶ່ງບໍ່ສະເດັດເມືອ. ແຕ່ນັ້ນ ມີຊາຍຄົນນຶ່ງຊື່ທ້າວຄຳເກີດ ເປັນບຸດຂອງສາວໃຊ້ແທ່ງພຣະຍາສາມແສນໄທ. ທ້າວຄຳເກີດໄດ້ເວົ້າອ້າງຕົນວ່າ ຕົນແມ່ນພຣະຍາສາມແສນໄທມາເກີດ ຄົນທັງຫລາຍກໍຫລົງເຊື່ອ ເພາະທ້າວຄຳເກີດຈື່ຈຳອ້ອຍອ້າມ້າຄົນ ຂອງພຣະຍາສາມແສນໄທໄດ້ຫມົດ ແລະ ເນື່ອງຈາກ ຄົນນັບຖືພຣະຍາສາມແສນໄທຫລາຍ ດັ່ງນັ້ນ ນາງເທວີ ຈຶ່ງອະພິເສກທ້າວຄຳເກີດຂຶ້ນເປັນພຣະເຈົ້າແຜ່ນດິນ. ທ້າວຄຳເກີດຄອງເມືອງໄດ້ 2 ປີປາຍ ກໍຕາຍ.

ເນື່ອງຈາກນາງເທວີ ເປັນຄົນສາມານໂຫດຮ້າຍ ປອງຂ້າແຕ່ກະສັດຢູ່ບໍ່ຂາດ ດັ່ງນັ້ນ ບັນດາກະສັດລູກຫລານທັງຫລາຍ ຈຶ່ງພາກັນຫລົບຫນີລີ້ຊ່ອນຢູ່ ບໍ່ມີຜູ້ໃດສາມາດເປັນເຈົ້າແຜ່ນດິນໄດ້. ພວກເສນາອາມາດເຫັນວ່າ ບ້ານເມືອງເກີດວຸ່ນວາຍ ຍ້ອນນາງເທວີເປັນຕົ້ນເຫດ ກໍພາກັນຈັບນາງເທວີ ແລະ ແສນຫລວງຊຽງລໍ ໄປປະຫານຊີວິດເສັຽ ທີ່ຜາດ່ຽວ ດ້ວຍການທໍຣະມານຢ່າງສາຫັດ ຄື ໃຫ້ນອນຫົວຫມູນຫີນ ແລະໃຫ້ເອົາຕີນຈຸ່ມນ້ຳໄວ້ຈົນໃຫ້ຂາດໃຈ. ແຕ່ນັ້ນມາ ຣາຊອານາຈັກລ້ານຊ້າງກໍຂາດຫວ່າງກະສັດຢູ່ເຖິງ 3 ປີ. ໃນລະຫວ່າງບ້ານເມືອງວຸ່ນວາຍນີ້ ພຣະມະຫາປາສມັນເຖຣະ ແລະ ພຣະມະຫາເທບລັງກາ ກໍເຖິງແກມໍຣະນາພາບ ນັກປາດທັງສາມທີ່ມາແຕ່ເມືອງຂເມນ ກໍເຖິງແກອະນິຈກັມໄປ ຍັງແຕ່ບຸດຂອງນັກປຣາດທັງສາມນັ້ນ ໄດ້ຮັບຕຳແຫນ່ງເປັນນາຍທະຫານເອກ ຕໍ່ມາຄື ນໍຣະສິງ ມີ (ບຸດຊາຍ 2 ຄົນ) ຜູ້ພີ່ຊື່ ນໍຣະສິງ, ຜູ້ນ້ອງຊື່ ນໍຣະນາຣາຍ; ນໍຣະເດດ ແລະ ນໍຣະຣາດ ກໍມີບຸດຊາຍຄົນລະຄົນ. ທັງ 4 ຄົນນີ້ ໄດ້ເປັນນັກປຣາດປະຈຳຣາຊສຳນັກ ດັ່ງນັ້ນ ເມື່ອບ້ານເມືອງຂາດພຣະມະຫາກະສັດ ທ່ານທັງ 4 ພ້ອມດ້ວຍເສນາອາມາດ ຈຶ່ງໄດ້ສະຖາປະນາ ພຣະມະຫາກະສັດທາທິໂກ ເຈົ້າວັດແກ້ວ ຂຶ້ນເປັນພຣະມະຫາສາມີ ແລະ ນິມົນພຣະມະຫາສມຸທໂຄດ ມາເປັນເຈົ້າວັດປາສມັນຕະ ແລ້ວມອບຣາຊການບ້ານເມືອງໃຫ້ແກ່ພຣະມະຫາເຖຣະເຈົ້າທັງສອງ ເປັນຜູ້ເບິ່ງແຍງຊ່ອຍຕລອດ 3 ປີ.

## 4. ຣັຊການພຣະໄຊຍະຈັກກະພັດແຜ່ນແຜ້ວ

ຄັ້ງນັ້ນ ພຣະມະຫາສັດທາທິໂກ ເຈົ້າວັດແກ້ວ ພຣະມະຫາສມຸທໂຄດ ເຈົ້າວັດປາສມັນຕະ ພ້ອມດ້ວຍນັກປຣາດທັງ 4 ແລະ ເສນາມຸນຕີທັງຫລາຍ ຈຶ່ງພາກັນລົງມາອາຣາທນາເອົາ ທ້າວວັງບຸຣີ ເຈົ້ານະຄອນວຽງຈັນ ເຊິ່ງມີພຣະນາມໃນເວລານັ້ນວ່າ ພຣະຍາຂວາປາສັກ (ເພາະພຣະອົງປຸກໂຮງຢູ່ໃກ້ປາກຫ້ວຍປາສັກ) ໃຫ້ຂຶ້ນເມືອສເວີຍຣາຊສົມບັດ ເປັນພຣະເຈົ້າແຜ່ນດິນຢູ່ນະຄອນຊຽງທອງ.